**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------

ສຳນັກງານນາຍົກລັດຖະມົນຕີ

ເລກທີ 96 /ນຍ.03

ວຽງຈັນ, ວັນທີ 11.06.2003

# ດຳລັດ

## ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ວ່າດ້ວຍ ການປູກໄມ້ເປັນສິນຄ້າ ແລະ ປົກປັກຮັກສາສິ່ງແວດລ້ອມ

----------------------

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ເລກທີ 01/95, ລົງວັນທີ 8/3/1995;
- ອີງຕາມໝວດທີ 3 ຂອງກົດໝາຍປ່າໄມ້ ເລກທີ 01/96, ລົງວັນທີ 11/10/1996;
- ອີງຕາມການຄົ້ນຄວ້າ ແລະ ສະເໜີຂອງ ລັດຖະມົນຕີວ່າການ ກະຊວງກະສິກຳ-ປ່າໄມ້ ເລກທີ 0011/ກປ.03, ລົງວັນທີ 13/01/2003.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ:**

ມາດຕາ 1. ໃຫ້ສືບຕໍ່ປຸກລະດົມຂະບວນການ ປູກໄມ້ເປັນສິນຄ້າ ແລະ ປົກປັກຮັກສາສິ່ງແວດລ້ອມ ໃຫ້ນັບມື້ນັບເພີ່ມຂຶ້ນ ແລະ ເປັນຂະບວນການກວ້າງຂວາງ ໃນທົ່ວປະເທດ.

ການປູກໄມ້ເປັນສິນຄ້າ ແມ່ນການປູກໄມ້ແບບເປັນສວນ, ມີປະລິມານຫຼາຍ, ມີການກຳນົດເຂດ, ຊະນິດພັນໄມ້ ແລະຄວາມຕ້ອງການຂອງຕະຫຼາດ; ມີຕາໜ່າງເສັ້ນທາງຄົມມະນາຄົມ, ນຳໃຊ້ເຕັກນິກວິຊາການ ເຂົ້າໃນການບົວລະບັດຮັກສາ, ຂຸດຄົ້ນ ແລະ ປຸງແຕ່ງ. ສຳລັບຊະນິດພັນໄມ້ທີ່ຈະປູກ ແມ່ນໄມ້ໃຫຍ່ໄວ, ໂດຍແມ່ນພັນໄມ້ພື້ນເມືອງເປັນຕົ້ນຕໍ ແລະ ບາງຊະນິດພັນໄມ້ທີ່ນຳເຂົ້າຈາກຕ່າງປະເທດ ທີ່ເຫັນວ່າມີຄວາມຈຳເປັນ.

ການປູກໄມ້ເພື່ອປົກປັກຮັກສາສິ່ງແວດລ້ອມ ແມ່ນການປູກໄມ້ຢູ່ຕາມແຄມທາງ, ສະຖານທີ່ສຳຄັນຕ່າງໆ, ສວນສາທາລະນະ, ເຂດກໍ່ສ້າງຊົນລະປະທານ, ເຂດຍອດນ້ຳ, ເຂດປ່າປ້ອງກັນ, ເຂດປ່າສະຫງວນ, ເຂດປ່າໄມ້ທີ່ລັດໄດ້ມອບໃຫ້ປະຊາຊົນຄຸ້ມຄອງ-ປົກປັກຮັກສາ-ນຳໃຊ້ ແລະ ເຂດຊາຍແດນລະຫວ່າງຊາດ.

ມາດຕາ 2. ໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ສົມທົບກັບ ອຳນາດການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ ແລະ ກຳນົດເນື້ອທີ່ ບ່ອນຕ້ອງໄດ້ປູກໄມ້ ແລະ ຟື້ນຟູປ່າ ເປັນຕົ້ນຢູ່ໃນເຂດທີ່ດິນປອກໂລ້ນ, ທີ່ດິນປ່າໄມ້ຊຸດໂຊມ, ທີ່ດິນປ່າໄມ້ເປົ່າຫວ່າງ, ທີ່ດິນປ່າເຫຼົ່າ ແລະ ດິນທາມ ດັ່ງທີ່ໄດ້ກຳນົດໄວ້ ໃນມາດຕາ 36 ຂອງກົດໝາຍປ່າໄມ້, ຈາກນັ້ນຈຶ່ງສ້າງເປັນແຜນການໄລຍະຍາວ, ໄລຍະກາງ ແລະ ໄລຍະສັ້ນ ເພື່ອເອົາເຂົ້າເປັນແຜນພັດທະນາເສດຖະກິດ - ສັງຄົມ ຂອງທ້ອງຖິ່ນ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 37 ຂອງກົດໝາຍປ່າໄມ້.

ມາດຕາ 3. ລັດ ປະຕິບັດນະໂຍບາຍສົ່ງເສີມການປູກໄມ້ ຢ່າງສະເໝີຕົ້ນ ສະເໝີປາຍ ຄື:

- ຍົກເວັ້ນພາສີທີ່ດິນ ທີ່ນຳໃຊ້ເຂົ້າໃນການປູກໄມ້ ຕາມມາດຕາ 34 ຂອງກົດໝາຍປ່າໄມ້.
- ທົດແທນຄ່າເສຍຫາຍ ແກ່ເຈົ້າຂອງຜູ້ປູກໄມ້ ໃນກໍລະນີ ທີ່ມີການເວນຄືນທີ່ດິນ ເພື່ອຮັບໃຊ້ສາທາລະນະປະໂຫຍດ.
- ອຳນວຍຄວາມສະດວກໃຫ້ແກ່ ຜູ້ຂໍລົງທຶນປູກໄມ້, ຂໍຕັດໄມ້ຈາກສວນປູກ ແລະ ຂໍສົ່ງໄມ້ທີ່ຕັດຈາກສວນປູກ ເພື່ອເປັນສິນຄ້າອອກຕ່າງປະເທດ.
- ຍົກເວັ້ນຄ່າບູລະນະປ່າໄມ້, ຄ່າຊັບພະຍາກອນປ່າໄມ້ ແລະ ຄ່າພັນທະຕ່າງໆ ໃນກໍລະນີທີ່ມີການຕັດໄມ້ຈາກສວນປູກ ເພື່ອໃຊ້ສອຍໃນຄອບຄົວ ແລະ ສາທາລະນະປະໂຫຍດ. ສຳລັບການຕັດໄມ້ຈາກສວນປູກ ເພື່ອເປັນສິນຄ້າພາຍໃນ ແລະ ສົ່ງອອກຕ່າງປະເທດນັ້ນ ແມ່ນໃຫ້ເສຍອາກອນລາຍໄດ້, ແຕ່ໃຫ້ຍົກເວັ້ນຄ່າບູລະນະປ່າໄມ້ ແລະ ຄ່າຊັບພະຍາກອນປ່າໄມ້.
- ໃຫ້ຄຳແນະນຳ ທາງດ້ານເຕັກນິກວິຊາການ ໃນການເກັບແກ່ນ, ການກ້າເບ້ຍ, ການປູກ ແລະ ການບົວລະບັດ.
- ນອກຈາກນີ້ ລັດຈະພິຈາລະນາໃຫ້ສິນເຊື່ອ ເພື່ອປູກໄມ້ ແລະ ສະໜອງແນວພັນໄມ້ ທີ່ມີຄຸນນະພາບ.

ມາດຕາ 4. ກະຊວງກະສິກຳ-ປ່າໄມ້, ກະຊວງອື່ນໆ, ອົງການທຽບເທົ່າກະຊວງ, ແຂວງ, ກຳແພງນະຄອນ ແລະເຂດພິເສດ ມີໜ້າທີ່ຈັດຕັ້ງປະຕິບັດ ແລະ ກວດກາການຈັດຕັ້ງປະຕິບັດ ດຳລັດສະບັບນີ້.

ມາດຕາ 5. ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ